رئاسة الشؤون الدينية
بالمسجد الحرام والمسجد النبوي

ລາວ | لاو | دَفْنُ المَوتَى فِي المَسَاجِدِ

# ການຝັງສົບຄົນຕາຍ ໃນມັສຍິດ

ຂຽນໂດຍ ສາດສະດາຈານຜູ້ຊ່ຽວຊານນະວຸດ
ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

# دَفْنُ المَوتَى فِي المَسَاجِدِ

# ການຝັງສົບຄົນຕາຍໃນມັສຍິດ


لِسَمَاحَةِ الشَّيْخِ العَلَّامَةِ
عَبْدِ العَزِيزِ بْنِ عَبْدِ اللهِ بْنِ بَازٍ
رَحِمَهُ اللهُ

ຂຽນໂດຍ ສາດສະດາຈານຜູ້ຊົງຄຸນນະວຸດ
ອັບດຸລອະຊີຊ ບິນ ອັບດຸລລໍຫ໌ ບິນ ບາຊ

بِسْمِ اللهِ الرَّحمَنِ الرَّحِيمِ

## ວາລະສານ ທີ່ສິບເອັດ:
## ການຝັງສົບຄົນຕາຍໃນມັສຍິດ

ບິສມິລລາຫ໌, ແລະ ມວນການສັນລະເສີນທັງຫຼາຍເປັນສິດຂອງອັລລໍຫ໌, ແລະ ຂໍການອວຍພອນຄວາມສັນຕິສຸກຈົ່ງມີແດ່ຣໍຊູລຂອງອັລລໍຫ໌, ຕະຫຼອດຈົນບັນດາວົງວານຕະກູນຂອງທ່ານ ແລະ ບັນດາຜູ້ທີ່ໄດ້ຮັບການຊີ້ແນະຕາມແນວທາງຂອງທ່ານ, ຕໍ່ໄປນີ້:

ຂ້າພະເຈົ້າໄດ້ອ່ານໜັງສືພິມ «ຄໍຣະຕູມ» ສະບັບລົງວັນທີ: 17/4/1415 ຮ.ສ. ຈຶ່ງໄດ້ພົບວ່າມີການເຜີຍແຜ່ຖະແຫຼງການໃນນັ້ນກ່ຽວກັບການຝັງສົບຂອງ ທ່ານ ມຸຮໍາມັດ ອັລ-ຫະຊັນ ອັລ-ອິດຣີຊີ ຢູ່ຄຽງຂ້າງບິດາຂອງທ່ານ ໃນມັສຍິດຂອງພວກເຂົາທີ່ເມືອງອຸມດຸຣມານ... ຯລຯ.

ແລະ ເນື່ອງຈາກສິ່ງທີ່ອັລລໍຫ໌ໄດ້ກໍານົດເປັນຫນ້າທີ່ໃນການໃຫ້ຄໍາຕັກເຕືອນແກ່ຊາວມຸສລິມ, ແລະ ການຊີ້ແຈງໃນການປະຕິເສດສິ່ງທີ່ຊົ່ວຮ້າຍ; ຂ້າພະເຈົ້າຈຶ່ງເຫັນສົມຄວນທີ່ຈະແຈ້ງເຕືອນວ່າ ການຝັງສົບໃນມັສຍິດເປັນສິ່ງທີ່ບໍ່ອະນຸຍາດ, ແທ້ຈິງແລ້ວມັນຄືຫນຶ່ງໃນຊ່ອງທາງທີ່ນໍາໄປສູ່ການຕັ້ງພາກີ, ແລະ ເປັນການກະທໍາຂອງຊາວຢິວ ແລະ ຄຣິດສະຕຽນທີ່ອັລລໍຫ໌ໄດ້ຕໍາໜິພວກເຂົາ, ແລະ ທ່ານຣໍຊູລຂອງພະອົງ ຊັລລັລລໍຮຸ ອະໄລຮິ ວະສັລລໍາ ໄດ້ສາບແຊ່ງພວກເຂົາ, ດັ່ງທີ່ມີລາຍງານໃນປຶ້ມສໍເຮັຍຫ໌ທັງສອງສະບັບ ຈາກທ່ານນາງ ອາອິຊະຫ໌ ຣໍດິຍັລລໍຮຸ ອັນຮາ, ຈາກທ່ານນະບີ ຊັລລັລລໍຮຸ ອະໄລຮິ ວະສັລລໍາ ວ່າ ທ່ານໄດ້ກ່າວ

ວວ່າ:

«لَعَنَ اللَّهُ الْيَهُودَ وَالنَّصَارَى، اتَّخَذُوا قُبُورَ أَنْبِيَائِهِمْ مَسَاجِدَ».

«ອັລລໍຫ໌ ໄດ້ສາບແຊ່ງພວກຢະຮູດ (ຢິວ) ແລະ ນາຊໍຣໍ (ຄຣິສຕຽນ) ທີ່ພວກເຂົາໄດ້ຍຶດເອົາບັນດາຫຼຸມສົບຂອງບັນດານະບີຂອງພວກເຂົາເປັນມັສຍິດ» ແລະ ລາຍງານທີ່ຖືກຕ້ອງຈາກມຸສລິມ ຈາກທ່ານຈຸນດຸບ ບິນ ອັບດິລລາຫ໌ ຈາກທ່ານນະບີ ﷺ ໄດ້ກ່າວວ່າ:

«أَلَا وَإِنَّ مَنْ كَانَ قَبْلَكُمْ كَانُوا يَتَّخِذُونَ قُبُورَ أَنْبِيَائِهِمْ وَصَالِحِيهِمْ مَسَاجِدَ، أَلَا فَلَا تَتَّخِذُوا الْقُبُورَ مَسَاجِدَ؛ فَإِنِّي أَنْهَاكُمْ عَنْ ذَلِكَ».

«ຈົ່ງຊາບເຖີດວ່າ ແທ້ຈິງ ບັນດາຊົນຊາດກ່ອນພວກເຈົ້າພວກເຂົາໄດ້ຍຶດຖືເອົາບັນດາກຸໂບຣຂອງບັນດານະບີ ແລະ ບັນດາຄົນດີຂອງພວກເຂົາເປັນບ່ອນເຮັດມັສຍິດ, ຈົ່ງຮູ້ໄວ້ເຖີດ ພວກເຈົ້າຢ່າໄດ້ຍຶດຖືເອົາບັນດາກຸໂບຣເປັນບັນດາມັສຍິດ; ເພາະແທ້ ຂ້ອຍໄດ້ຫ້າມພວກເຈົ້າຈາກສິ່ງນັ້ນ». ແລະ ຫະດີຊອື່ນ ໆ ທີ່ມີຄວາມໝາຍທຳນອງນີ້ຍັງມີອີກຫຼາຍ.

ສະນັ້ນ, ໜ້າທີ່ທີ່ຈຳເປັນຂອງຊາວມຸສລິມໃນທຸກໆ ສະຖານທີ່ - ບໍ່ວ່າຈະເປັນຜູ້ປົກຄອງປະເທດ ຫຼື ປະຊາຊົນ - ຄື: ຕ້ອງຢຳເກງຕໍ່ອັລລໍຫ໌, ແລະ ລະມັດລະວັງໃນສິ່ງທີ່ພຣະອົງຊົງຫ້າມ, ແລະ ໃຫ້ຝັງຜູ້ຕາຍຂອງພວກເຂົາຢູ່ນອກມັສຍິດ, ດັ່ງທີ່ທ່ານນະບີ ຊໍລລັລລໍຮຸ ອະລັຍຮິ ວະສັລລັມ ແລະບັນດາສໍຫາບະຂອງທ່ານ ຣໍດິຍັລລໍຮຸອັນຮຸມ ເຄີຍຝັງຜູ້ຕາຍຢູ່ນອກມັສຍິດ, ແລະເຊັ່ນດຽວກັນກັບຜູ້ທີ່ຈະເລີນຮອຍຕາມພວກເພິ່ນດ້ວຍຄຸນງາມຄວາມດີ.

ສ່ວນການມີຢູ່ຂອງກຸໂບຣຂອງທ່ານນະບີ ﷺ ແລະ ສອງສໍຫາບະຫ໌ຂອງທ່ານຄື ອະບູ ບັກກຣ໌ ແລະ ອຸມັຣ ຣໍດິຍັລລໍຫຸ ອັນຮຸມາ ໃນມັສຍິດຂອງທ່ານ ﷺ ນັ້ນ; ບໍ່ສາມາດນໍາມາເປັນຫຼັກຖານອ້າງອີງໄດ້ໃນການຝັງໄມຍິດໃນບັນດາມັສຍິດ; ເພາະວ່າທ່ານ ﷺ ໄດ້ຖືກຝັງໃນເຮືອນຂອງທ່ານ – ໃນເຮືອນຂອງນາງ ອາອີຊະຫ໌ ຣໍດິຍັລລໍຫຸ ອັນຮາ –, ຫຼັງຈາກນັ້ນ ສອງສໍຫາບະຫ໌ຂອງເພິ່ນກໍໄດ້ຖືກຝັງຮ່ວມກັບເພິ່ນ, ເມື່ອ ອັລ-ວະລີດ ບິນ ອັບດິລ ມະລິກ ໄດ້ຂະຫຍາຍມັສຍິດ ເພິ່ນກໍໄດ້ນໍາເອົາຫ້ອງດັ່ງກ່າວລວມເຂົ້າໄປໃນມັສຍິດ ໃນຊ່ວງຕົ້ນຂອງສະຕະວັດທີໜຶ່ງແຫ່ງຮິຈເຣາະຫ໌ສັກກະຣາດ, ແລະ ບັນດາຜູ້ມີຄວາມຮູ້ກໍໄດ້ຕໍາໜິການກະທໍາດັ່ງກ່າວຂອງເພິ່ນ, ແຕ່ເພິ່ນເຫັນວ່າສິ່ງນັ້ນບໍ່ໄດ້ເປັນອຸປະສັກຕໍ່ການຂະຫຍາຍ, ແລະ ແທ້ຈິງເລື່ອງດັ່ງກ່າວແມ່ນມີຄວາມຊັດເຈນ ບໍ່ມີຄວາມຄຸມເຄືອ.

ແລະ ຈາກສິ່ງດັ່ງກ່າວ ຈຶ່ງເປັນທີ່ປະຈັກແຈ້ງແກ່ຊາວມຸສລິມທຸກຄົນວ່າ: ແທ້ຈິງທ່ານນະບີ ﷺ ແລະ ສໍຫາບະຫ໌ທັງສອງຂອງເພິ່ນ ຣໍດິຍັລລໍຮຸ ອັນຮຸມາ ບໍ່ໄດ້ຖືກຝັງຢູ່ໃນມັສຍິດ, ແລະ ການທີ່ຫຼຸມຝັງສົບຂອງພວກເພິ່ນຖືກລວມເຂົ້າໄປໃນມັສຍິດເນື່ອງຈາກການຂະຫຍາຍນັ້ນ ບໍ່ແມ່ນຫຼັກຖານອ້າງອີງໃນການອະນຸຍາດໃຫ້ຝັງສົບໃນມັສຍິດ; ເພາະວ່າພວກເພິ່ນບໍ່ໄດ້ຢູ່ໃນມັສຍິດ, ແຕ່ຫາກຢູ່ໃນເຮືອນຂອງທ່ານ ﷺ, ແລະ ເພາະວ່າການກະທໍາຂອງທ່ານວະລີດ ບໍ່ສາມາດເປັນຫຼັກຖານອ້າງອີງໃຫ້ແກ່ຜູ້ໃດໄດ້ໃນເລື່ອງນີ້, ແຕ່ແທ້ຈິງແລ້ວ ຫຼັກຖານອ້າງອີງນັ້ນແມ່ນຢູ່ໃນຄໍາພີ (ກຸຣອານ) ແລະ ຊຸນນະຫ໌, ແລະ ໃນມະຕິທີ່ເປັນເອກະພາບຂອງຊາວສະລັຟແຫ່ງອຸມມະຫ໌, ຣໍດິຍັລລໍຮຸ ອັນຮຸມ, ແລ

ະ ຂໍພຣະອົງໄດ້ໂຜດໃຫ້ພວກເຮົາເປັນຜູ້ຕາມພວກເຂົາດ້ວຍຄວາມດີງາມ.

ເພື່ອເປັນການໃຫ້ຄຳຕັກເຕືອນ ແລະ ເພື່ອໃຫ້ພົ້ນຈາກຄວາມຮັບຜິດຊອບ, ຈຶ່ງໄດ້ຮຽບຮຽງຂຶ້ນໃນວັນທີ: 14/5/1415 ຮ.ສ.

ອັລລໍຫ໌ເປັນຜູ້ປະທານຄວາມສຳເລັດ. ແລະ ຂໍຄວາມຈຳເລີນ ແລະ ຄວາມສັນຕິສຸກ ຈົ່ງປະສົບແກ່ທ່ານນະບີຂອງເຮົາ ມຸຮຳມັດ, ຕະຫຼອດຮອດວົງວານ ແລະ ສະຫາຍຂອງທ່ານ, ແລະ ບັນດາຜູ້ທີ່ດຳເນີນຕາມພວກເຂົາທັ້ງຫຼາຍດ້ວຍຄວາມດີງາມ.

***

lo397v4.0 - 12/04/2026

رئاسة الشؤون الدينية
بالمسجد الحرام والمسجد النبوي

# رسالة الحرمين

# ສານຈາກສອງສະຖານທີ່ແຫ່ງຄວາມສັກສິດ

ເນື້ອຫາຄຳແນະນຳທາງສາສະໜາ
ສຳຫຼັບຜູ້ທີ່ເດີນທາງສູ່ມັສຍິດອັລຫະຣອມ
ແລະ ມັສຍິດອັນນະບະວີ ໃນພາສາຕ່າງໆ